U. S. ການຄຸ້ມຄອງອາຫານ ແລະ ຢາ
ສູນຄວາມປອດໄພດ້ານອາຫານ ແລະ ໂພສະນາການນຳໃຊ້
ເດືອນ ມີນາ 22, 2000

# ຄູ່ມືການຈັດຕັ້ງປະຕິບັດ ສຳລັບການໃຫ້ຄຳແນະນຳຜູ້ບໍລິໂພກ ວ່າດ້ວຍລະຫັດອາຫານ FDA

(ສ່ວນທີ 3-603.11 ໃນລະຫັດອາຫານຕົວແບບ FDA ປີ 1999)

ສ່ວນທີ 3-603 ຂອງລະຫັດອາຫານ ປີ 1999
ຂໍ້ຄວາມແຜ່ນພັບຕົວແບບຂອງ FDA
ຄູ່ມືການຈັດຕັ້ງປະຕິບັດການໃຫ້ຄຳແນະນຳຜູ້ບໍລິໂພກ

## ຄູ່ມືການຈັດຕັ້ງປະຕິບັດການໃຫ້ຄຳແນະນຳດ້ານລະຫັດອາຫານ FDA

- ຈຸດປະສົງ
- ຄວາມເປັນໄປໄດ້
- ຄຳອະທິບາຍສັບ
- ສ່ວນທີ່ສຳຄັນຂອງການໃຫ້ຄຳແນະນຳຜູ້ບໍລິໂພກ
- ຄຳແນະນຳຜະລິດພັນສະເພາະ
- ການປະຕິບັດຕາມທີ່ໜ້າເພິ່ງພໍໃຈ

    ຮູບແບບການກຳນົດລາຍລະອຽດສຳລັບການເປີດເຜີຍ ແລະ ການແຈ້ງເຕືອນ
    ການເປີດເຜີຍ ແລະ ການແຈ້ງເຕືອນ
    ຂໍ້ຄວາມແຜ່ນພັບຕົວແບບຂອງ FDA
    ເງື່ອນໄຂທີ່ສຳຄັນສຳລັບແຜ່ນພັບທີ່ອອກແບບໄດ້ດ້ວຍຕົນເອງ

- ແຜນວາດການປະຕິບັດຕາມທີ່ໜ້າເພິ່ງພໍໃຈ

## ຈຸດປະສົງ

ຈຸດປະສົງຂອງການໃຫ້ຄຳແນະນຳຜູ້ບໍລິໂພກກ່ຽວກັບລະຫັດອາຫານແມ່ນເພື່ອໃຫ້ແນ່ໃຈວ່າຜູ້ບໍລິໂພກໄດ້ຮັບຮູ້ກ່ຽວກັບຄວາມສ່ຽງໂດຍສະເພາະຜູ້ທີ່ມີຄວາມສ່ຽງໃນການກິນອາຫານດິບ ຫຼື ບຸງບໍ່ສຸກ. FDA, ເຊື່ອວ່າຜູ້ບໍລິໂພກທີ່ໄດ້ຮັບການແຈ້ງມີບົດບາດສຳຄັນໃນການປົກປ້ອງຕົນເອງຈາກພະຍາດທີ່ເກີດຈາກອາຫານ ແລະ ພະຍາດອື່ນໆທີ່ບໍ່ສາມາດຄາດດເດົາໄດ້. ຜູ້ບໍລິໂພກທີ່ໄດ້ຮັບການແຈ້ງສາມາດປະເມີນຄວາມສ່ຽງໄດ້ດີທີ່ສຸດ ແລະ ຄາດເດົາຄວາມຮັບຜິດຊອບໃນການຕັດສິນໃຈສັ່ງອາຫານ, ອີງຕາຄວາມຮູ້ ແລະ ຄວາມເຂົ້າໃຈໃນສະຖານະການ.

ເອກະສານແນະນຳນີ້ແມ່ນເພື່ອຊ່ວຍໃຫ້ຜູ້ກວດສອບ ແລະ ອຸດສາຫະກຳການຈັດຕັ້ງປະຕິບັດກ່ຽວກັບການໃຫ້ຄຳແນະນຳຜູ້ບໍລິໂພກ. ເຊິ່ງຕ້ອງນຳໃຊ້ຄຽງຄູ່ກັບລະຫັດອາຫານຂອງ FDA.

## ຄວາມເປັນໄປໄດ້

ຜູ້ໃຫ້ຄຳແນະນຳຜູ້ບໍລິໂພກເອົາໃຈໃສ່ນຳໃຊ້ກັບຮ້ານຄ້າຈຳໜ່າຍອາຫານບ່ອນທີ່ອາຫານທີ່ມາຈາກສັດທີ່ດິບ ຫຼື ປຸງບໍ່ສຸດ ຫຼື ວັດຖຸດິບໄດ້ຖືກຈຳໜ່າຍ ຫຼື ບໍລິການສຳລັບບໍລິໂພກ ໃນຮູບແບບດິບ ຫຼື ປຸງບໍ່ສຸກ. ນີ້ລວມເອົາຮ້ານຄ້າຈຳໜ່າຍອາຫານທຸກຊະນິດເມືອງໃດກໍ່ຕາມທີ່ມີຄວາມເປັນໄປໄດ້ທີ່ສົມເຫດສົມຜົນທີ່ອາຫານຈະຖືກບໍລິໂພກໂດຍບໍ່ມີຜົນ, ຜ່ານການປຸງສຸກ,- ເຊັ່ນ ຮ້ານອາຫານ, ຮ້ານອາຫານດິບ, ການບໍລິການອາຫານດ່ວນ, ການພັກພາ, ແລະ ສະຖານທີ່ ບ່ອນຮ້ານຄ້າມີການດຳເນີນການເຊັ່ນສ່ວນຕ່າງໆເຊັ່ນ ຮ້ານຂາຍຜະລິດພັນຈາກຊີ້ນດິບ ຫຼື ອາຫານທະເລ.

## ຄຳອະທິບາຍສັບ

ການອະທິບາຍສັບຕໍ່ໄປນີ້ແມ່ນໃຊ້ໄດ້ກັບການແປຄວາມ ແລະ ການນຳໃຊ້ໃນການໃຫ້ຄຳແນະນຳແກ່ຜູ້ບໍລິໂພກ. ຄຳສັບທີ່ໄດ້ນິຍາ ແລະ ທຸກຮູບການຂອງຄຳສັບທີ່ໄດ້ນິຍາມ, ແມ່ນເປັນຕົວໜັງສືເນີ້ງທັງໝົດໃນເອກະສານນີ້.

*ການເປີດເຜີຍ* ໝາຍເຖິງການບົ່ງຊີ້ດ້ວຍການຂຽນໂດຍທີ່ວັດຖຸ, ຫຼື ສາມາດສັ່ງ, ຍັງດິບ ຫຼື ປຸງບໍ່ສຸກທັງໝົດ, ຫຼື ສິ່ງທີ່ມີວັດຖຸດິບທີ່ດິບ ຫຼື ປຸງບໍ່ສຸກ.

*ເງື່ອນໄຂທີ່ສຳຄັນ* ໝາຍເຖິງ ການລະບຸທີ່ຕ້ອງໄດ້ເປັນໄປຕາມເງື່ອນໄຂເມື່ອ ມີການພັດທະນາແຜ່ນພັບການໃຫ້ຄຳແນະນຳຜູ້ບໍລິໂພກທີ່ອອກແບບສະເພາະນີ້ທີ່ກ່ຽວກັບການບໍລິໂພກອາຫານທີ່ມາຈາກສັດທີ່ດິບ ຫຼື ປຸງບໍ່ທັນສຸກ.

*ລາຍການອາຫານ* ໝາຍເຖິງທຸກຢ່າງທີ່ຜູ້ບໍລິໂພກອ່ານ (ຢູ່ໂຕະກາງເຕັ້ນ, ປ້າຍປະກາດ, ກະດານ, ຫຼື ບ່ອນອື່ນໆທີ່ເປັນລາຍລັກອັກສອນ) ເພື່ອສັ່ງອາຫານທີ່ເລືອກ.

*ທີ່ມີທົ່ວໄປຢູ່ສາທາລະນະ* ໝາຍເຖິງຄວາມພ້ອມທີ່ສາມາດເຂົ້າເຖິງໄດ້ໂດຍຜູ້ບໍລິໂພກ (ໂດຍບໍ່ມີການຮ້ອງຂໍ) ກ່ອນທີ່ຈະມີການວາງລາຍການອາຫານ ຫຼື ລາຍການທີ່ເລືອກ.

*ການແຈ້ງເຕືອນ* ໝາຍເຖິງ ຄຳປະໂຫຍກທີ່ເປັນລາຍລັກອັກສອນທີ່ກ່ຽວຂ້ອງກັບຄວາມສ່ຽງດ້ານສຸຂະພາບຂອງການບໍລິໂພກອາຫານທີ່ມາຈາກສັດທີ່ດິບ ຫຼື ປຸງບໍ່ສຸກ.

*ຫອຍກາບ* ໝາຍເຖິງປະເພດທີ່ກິນດິບ ຫຼື ປຸງບໍ່ສຸກ ໄດ້ຂອງ ຫອຍນາງລົມ, ຫອຍແຄງ, ຫອຍແມງພູ່, ແລະ ຫອຍເຊວ ຫຼື ພາກສ່ວນທີ່ກິນໄດ້, ຍົກເວັ້ນເມື່ອຜະລິດພັນຂອງຫອຍເຊວມີພຽງແຕ່ກ້າມເທົ່ານັ້ນ. ນອກນີ້ຍັງໝາຍເຖິງ *ຫອຍກາບແຂງ* ໃນປະໂຫຍກ *ການແຈ້ງເຕືອນ* ນຳ.

*ຫອຍກາບດຽວ* ຫມາຍເຖິງຫ*ອຍທີ່ຢູ່ໃນກາບ* ທີ່ດິບ.

## ສ່ວນທີ່ສຳຄັນຂອງການໃຫ້ຄຳແນະນຳຜູ້ບໍລິໂພກ

ພາຍໃຕ້ § 8-405.11 ຂອງລະຫັດອາຫານ, ລາຍການທີ່ສຳຄັນຕ້ອງໄດ້ຖືກແກ້ໄຂພາຍໃນ 10 ວັນຂອງມື້ທີ່ເກີດຂຶ້ນ. ຖ້າເຫັນວ່າຮ້ານຄ້າມີການລະເມີນລະບຽບການໃຫ້ຄຳປຶກສາຜູ້ບໍລິໂພກ, ຕ້ອງມີວິທີໃນການປະຕິບັດເຊັ່ນທີ່ໄດ້ກ່າວໄວ້ໃນເອກະສານນີ້ ແລະ ເອກະສານອື່ນໆ ເພື່ອໃຫ້ການບັນລຸຈຸດປະສົງຢ່າງໜ້າເພິ່ງພໍໃຈ ຕ້ອງໄດ້ຮັບການຄົ້ນຄວ້າຮ່ວມກັນໂດຍຮ້ານຄ້າ ແລະ ເຈົ້າໜ້າທີ່ກວດສອບ. ໃຫ້ສະແດງຄວາມພະຍາຍາມດ້ານການປັບປຸງທີ່ດີ, ບາງເຫດການທີ່ລວມເອົາໄລຍະທຳອິດຂອງການໃຫ້ຄຳແນະນຳຜູ້ບໍລິໂພກນີ້ໃນຮ້ານຄ້າຈຳໜ່າຍອາຫານຍ່ອຍ ເພື່ອຮັບປະກັນເວລາ ແລະ ການປະຕິບັດກ່ອນທີ່ຈະມີການຈັດຕັ້ງປະຕິບັດເພື່ອບັງຄັບໃຊ້.

## ຄຳແນະນຳຜະລິດພັນສະເພາະ

ຜູ້ໃຫ້ຄຳແນະນຳຜູ້ບໍລິໂພກອາດຈະຕ້ອງປັບໃຫ້ເຂົ້າກັບອາຫານສະເພາະຖ້າຮ້ານຄ້າທີ່ຈຳໜ່າຍອາຫານມີ *ລາຍການອາຫານທີ່ຈຳກັດ* ຫຼື ໃຫ້ບໍລິການສະເພາະອາຫານທີ່ໄດ້ມາຈາກເນື້ອສັດໃນຮູບແບບດິບ, ບຸງບໍ່ສຸກ ຫຼື ພ້ອມຮັບປະທານ. ຍົກຕົວຢ່າງ, ຮ້ານຂາຍອາຫານດິບບໍລິການ *ຫອຍກາບ* ທີ່ປອກເປືອກເຄິ່ງໜຶ່ງ, ແຕ່ບໍ່ມີອາຫານທີ່ໄດ້ມາຈາກຊີ້ນສັດທີ່ດິບ ຫຼື ບຸງບໍ່ສຸກ, ທີ່ຄຳແນະນຳຜູ້ບໍລິໂພກຫ້າມບໍ່ໃຫ້ກິນ *ຫອຍກາບ.* ຮ້ານຂາຍອາຫານດິບອາດຕ້ອງເລືອກ *<u>ປະໂຫຍກແຈ້ງເຕືອນ 2</u>* ຂອງເອກະສານນີ້ເພື່ອຍົກໃຫ້ເຫັນເຖິງຄວາມສ່ຽງທີ່ເກີດຂຶ້ນເມື່ອຜູ້ບໍລິໂພກນັ້ນໆມີພະຍາດປະຈຳຕົວທີ່ບໍລິໂພກ *ຫອຍກາບ* ທີ່ບຸງບໍ່ສຸກພຽງພໍ.

ຖ້າຮ້ານຄ້າຈຳໜ່າຍອາຫານທີ່ມີແຕ່ອາຫານດິບ, ອາຫານທີ່ພ້ອມຮັບປະທານ ຈຳໜ່າຍ ຫຼື ບໍລິການ *ຫອຍເປືອກດຽວ* ຫຼື *ຫອຍໃບກາບ,* ກອງປະຊຸມກ່ຽວກັບຄວາມສະອາດດ້ານຫອຍຂ້າມລັດ (ISSC) ທີ່ໄດ້ຜະລິດແຜ່ນພັບກ່ຽວກັບຫອຍນາງລົມດິບ ແລະ ຫອຍແຄງທີ່ມີການປະຕິບັດຕາມຢ່າງໜ້າເພິ່ງພໍໃຈ. ໃນກໍລະນີ, ແຜ່ນພັບຈາກ ISSC ຕ້ອງ *ສາມາດເຂົ້າເຖິງໄດ້ໂດຍສາທາລະນະ.*

## ການປະຕິບັດຕາມທີ່ໜ້າເພິ່ງພໍໃຈ

### ຈຸດປະສົງທົ່ວໄປ:

ການປະຕິບັດທີ່ໜ້າເພິ່ງພໍໃຈກັບລະຫັດອາຫານຂອງຄຳແນະນຳຜູ້ບໍລິໂພກແມ່ນໄດ້ຮັບການເຕີມເຕັມເມື່ອ *ການເປີດເຜີຍ* ແລະ *ການແຈ້ງເຕືອນ* ມີໃຫ້ໃນຮູບແບບທີ່ສອດຄ່ອງກັບຄຳແນະນຳ. ຂໍ້ມູນທີ່ມີເນື້ອຍໃນກ່ຽວກັບ *ການເປີດເຜີຍ* ແລະ *ການແຈ້ງເຕືອນ* ແມ່ນເຂົ້າໄດ້*ໂດຍສາທາລະນະ* ແລະ ສາມາດອ່ານໄດ້ດັ່ງນັ້ນຜູ້ບໍລິໂພກມີຜົນປະໂຫຍດໃນປະໂຫຍກທັງສອງນີ້ (*ການເປີດເຜີຍ* ແລະ *ການແຈ້ງເຕືອນ)* ກ່ອນທີ່ຈະຕັດສິນໃຈສັ່ງ.

ເອກະສານຄູ່ມືບໍ່ສາມາດໃຊ້ໄດ້ກັບທຸກໆສະຖານະການ. ດັ່ງນັ້ນ, ມັນມີຄວາມຕ້ອງການໃນການສົນທະນາເລື້ອຍໆ ລະຫວ່າງ ຮ້ານຄ້າຈຳໜ່າຍອາຫານ ແລະ ເຈົ້າໜ້າທີ່ກວດສອບ ເຊັ່ນ ວິທີທີ່ມີປະສິດທິຜົນທີ່ສຸດແມ່ນການເຮັດໄດ້ຕາມຈຳປະສົງສະເພາະຂອງການປະຕິບັດທີ່ມີຄວາມເພິ່ງພໍໃຈ.

### ການລະບຸຮູບແບບສຳລັບ *ການເປີດເຜີຍ* ແລະ *ການແຈ້ງເຕືອນ:*

**ພາສາ:** ພາສາທີ່ໃຊ້ໃນລາຍການອາຫານຕ້ອງກົງກັບພາສາທີ່ໃຊ້ຢູ່ໃນບົດຄວາມ *ການເປີດເຜີຍ* ແລະ *ການແຈ້ງເຕືອນ* . ຍົກຕົວຢ່າງ, ລາຍການອາຫານຂຽນເປັນພາສາອັງກິດ ຕ້ອງເຮັດໃຫ້ *ການເປີດເຜີຍ* ແລະ *ການແຈ້ງເຕືອນ* ເປັນພາສາອັງກິດ. *ການເປີດເຜີຍ* ແລະ *ການແຈ້ງເຕືອນ ອາດຈະເປັນພາສາອື່ນ.*

**ຂະໜາດຕົວໜັງສື:** ຂະໜາດຕົວໜັງສືໃນເອກະສານຕ້ອງເທົ່າຜ່ານີ້ ຫຼື ໃນໂຕະທີ່ຕັ້ງເຕັ້ນແມ່ນເທົ່າກັບ 11 ຄະແນນ.

ສຳລັບປະໂຫຍກໃນປ້າຍແຈ້ງເຕືອນ, ຄຳເວົ້າຕ້ອງສາມາດອ່ານໄດ້ຄ້າຍຄືກັບລາຍການອາຫານ ທີ່ມີຢູ່ໃນປ້າຍກອບທາ., ບໍ່ວ່າປ້າຍປະກາດຈະເປັນ*ລາຍການອາຫານ*ທີ່ໃນໍາໃຊ້ເພື່ອຈຸດປະສົງດຽວກັບ *ການແຈ້ງເຕືອນ* ຫຼື ບໍ່ກໍ່ຕາມ, ຂະໜາດຂອງຕົວໜັງສືຕ້ອງໃຫ້ສາມາດອ່ານໄດ້ຈາກບ່ອນທີ່ຜູ້ບໍລິໂພກຍືນຢູ່ສາມາດອ່ານໄດ້.

ສຳລັບປະໂຫຍກຢູ່ໃນສະຫຼາກທີ່ຂຶ້ນຕົ້ນໃນລະດັບຮ້ານຄ້າ, ຄຳແນະນຳສິນຄ້າແມ່ນອີງຕາມ CFR ຂອງ ກົດໝາຍວ່າດ້ວຍການຕິດສະຫຼາກ ແລະ ການຫຸ້ມຫໍ່ທີ່ເປັນທຳ, 21CFR 101.2 ເຊິ່ງລະບຸວ່າຂະໜາດຂອງຕົວໜັງສືຕ້ອງໃກ້ຄຽງກັບຂະໜາດຂອງແຜງສະແດງ. ປັດໃຈອື່ນໆສາມາດສົ່ງຜົນກະທົບຕໍ່ການອ່ານ, ເຊັ່ນ ປະເພດຂອງຕົວໜັງສື ແລະ ພື້ນຫຼັງ ກັບ ປະເພດຂອງສີ.

**_ການເປີດເຜີຍ_**

**ຈຸດປະສົງ:**

*ການເປີດເຜີຍຕ້ອງ:*

- ຢູ່ໃນ *ລາຍການອາຫານ* ຫຼື, ໃນບ່ອນທີ່ຂາດຫາຍໄປຈາກ *ລາຍການອາຫານ*, ຕ້ອງໄດ້ສະແດງເປັນລາຍລັກອັກສອນໃຫ້ຜູ້ບໍລິໂພກໄດ້ເຫັນ, ແລະ
- ກໍານົດລາຍການອາຫານທີ່ຕ້ອງ *ການການເປີດເຜີຍ*, ແລະ
- ລະບຸວ່າອາຫານນັ້ນແມ່ນ, ຫຼື ມີ, ມາຈາກຊີ້ນສັດທີ່ດິບ, ຫຼື ປຸງບໍ່ສຸກ.

**ວິທີການປະຕິບັດຕາມ:**

1. *ການເປີດເຜີຍດ້ວຍການອະທິບາຍ:* ອາຫານທີ່ໄດ້ຮັບການອະທິບາຍ, ເຊັ່ນ:
   - ຫອຍນາງລົມທີ່ມີເປືອກດຽວ (ຫອຍດິບ),
   - ສະຫຼັດຊີຊ່າທີ່ມີສ່ວນປະສົມຂອງໄຂ່ດິບ, ແລະ
   - ແຮມເບີເກີ (ສາມາດປຸງສຸກຕາມສັ່ງ); ຫຼື
2. *ການເປີດເຜີຍ* ໂດຍໃສ່ເຄື່ອງໝາຍດອກຈັນໃສ່ລາຍການອາຫານຢູ່ບ່ອນທ້າຍທີ່ບົ່ງບອກວ່າ; ອີງຕາມສະຖານະການ, ອາຫານນັ້ນ:

   *"ໄດ້ບໍລິການດິບ ຫຼື ປຸງບໍ່ສຸກ," ຫຼື*
   *"ມີ (ຫຼື ອາດມີ) ສ່ວນປະກອບທີ່ດິບ ຫຼື ປຸງບໍ່ສຸກ"; ແລະ*

3. ເມື່ອມີການນໍາໃຊ້ *ລາຍການອາຫານ*:
   - ດັດແກ້ *ລາຍການອາຫານ* ຜ່ານການໃຊ້ສະຕິດເກີ້ຕິດແປະແບບຖາວອນ; ຫຼື
   - ພິມ *ລາຍການອາຫານ;* ຫຼື
   - ນໍາສະເໜີການແຈ້ງ *ການເປີດເຜີຍ* ທີ່ເປັນລາຍລັກອັກສອນຕ່າງຫາກ ໃຫ້ຜູ້ບໍລິໂພກຄຽງຄູ່ກັບ *ລາຍການອາຫານ;* ຫຼື
4. ບ່ອນທີ່ຂາດຫາຍໄປຂອງລາຍການອາຫານ:
   - ນໍາສະເໜີການແຈ້ງ *ການເປີດເຜີຍ* ທີ່ເປັນລາຍລັກອັກສອນໃຫ້ຜູ້ບໍລິໂພກ.

## *ການແຈ້ງເຕືອນ*

**ຈຸດປະສົງ:**

ຖ້າຂໍ້ຄວາມ *ການແຈ້ງເຕືອນ* ທັງສອງມີການນໍາໃຊ້ຂໍ້ມູນການແນະນໍາຜູ້ບໍລິໂພກ, ຂໍ້ຄວາມນັ້ນຕ້ອງຄຽງຄູ່ກັບ *ການແຈ້ງເຕືອນ* ແລະ ຈັດວາງໄວ້ຢູ່ໜຶ່ງໃນບ່ອນດັ່ງຕໍ່ໄປນີ້:

- ຢ່າງໜ້ອຍໜຶ່ງອັນຢູ່ໜ້າໃດກໍ່ໄດ້ຂອງ *ລາຍການອາຫານ* (ດີແທ້ແມ່ນໜ້າທໍາອິດ ຫຼື ໜ້າສຸດທ້າຍ) ແລະ ຕ້ອງຢູ່ໃນ *ລາຍການອາຫານ* ເພື່ອໃຫ້ຜູ້ບໍລິໂພກສາມາດເຫັນໄດ້ງ່າຍ, ຫຼື
- ຢູ່ປ້າຍ, ໂຕະກາງເຕັນ, ຫຼື ໃນຮູບແບບການຂຽນອື່ນໆ.

**ວິທີການປະຕິບັດຕາມ:**

1. ໃຊ້ ຂໍ້ຄວາມ *ການແຈ້ງເຕືອນ* ໜຶ່ງໃນສອງອັນທີ່ມີຄໍາແນະນໍາແທ້:
   - *ຂໍ້ຄວາມ ການແຈ້ງເຕືອນ* ທີ 1:

     *"ການບໍລິໂພກຊີ້ນ, ຊີ້ນໄກ່, ອາຫານທະເລ, ຫອຍກາບ, ຫຼື ໄຂ່ດິບ ຫຼື ບຸງບໍ່ສຸກອາດເພີ່ມຄວາມສ່ຽງຕໍ່ພະຍາດທີ່ເກີດຈາກອາຫານ"*; ຫຼື

   - *ຂໍ້ຄວາມ ການແຈ້ງເຕືອນ* ທີ 2:

     *"ການບໍລິໂພກຊີ້ນ, ຊີ້ນໄກ່, ອາຫານທະເລ, ຫອຍກາບ, ຫຼື ໄຂ່ດິບ ຫຼື ບຸງບໍ່ສຸກອາດເພີ່ມຄວາມສ່ຽງຕໍ່ພະຍາດທີ່ເກີດຈາກອາຫານ, ໂດຍສະເພາະແມ່ນຖ້າທ່ານມີພະຍາດປະຈໍາຕົວ."*

2. ນໍາໃຊ້ແຜ່ນພັບຄໍາແນະນໍາຜູ້ບໍລິໂພກ.

   **ທາງເລືອກທີ 1:**
   ລະຫັດອາຫານ ປີ 1999 ມີທາງເລືອກໃຫ້ເປີດເຜີຍລາຍການອາຫານຢູ່ດ້ານລຸ່ມທີ່ມີຂໍ້ຄວາມ *ການແຈ້ງເຕືອນ* ທີ່ຊ່ວຍໃຫ້ຜູ້ອ່ານເຂົ້າເຖິງແຜ່ນພັບຄໍາແນະນໍາຜູ້ບໍລິໂພກ:

   *"ເພື່ອຄວາມປອດໄພຂອງລາຍການດັ່ງນີ້, ຂໍ້ມູນທີ່ເປັນລາຍລັກອັກສອນແມ່ນມີໃຫ້ຕາມຄໍາຂໍ."*

   ເມື່ອແຜ່ນພັບໄດ້ຖືກນໍາໃຊ້ເພື່ອແຈ້ງຜູ້ບໍລິໂພກກ່ຽວກັບຄວາມສ່ຽງຂອງເຂົາເຈົ້າ ແລະ ແຜ່ນພັບ <u>ແມ່ນບໍ່</u> *ມີໃຫ້ທົ່ວໄປ*, ຂໍ້ຄວາມ *ການແຈ້ງເຕືອນ* ດ້ານເທິງຕ້ອງໄດ້ກ່າວໄວ້ຢູ່ໃນ *ລາຍການອາຫານ.*

   ເມື່ອແຜ່ນພັບໄດ້ຖືກນໍາໃຊ້ເພື່ອແຈ້ງຜູ້ບໍລິໂພກກ່ຽວກັບຄວາມສ່ຽງຂອງເຂົາເຈົ້າ ແລະ ແຜ່ນພັບ <u>ແມ່ນ</u> *ມີໃຫ້ທົ່ວໄປ*, ຂໍ້ຄວາມ *ການແຈ້ງເຕືອນ* ດ້ານເທິງແມ່ນບໍ່ຈໍາເປັນຕ້ອງໄດ້ກ່າວໄວ້ຢູ່ໃນ *ລາຍການອາຫານ.*

   **ທາງເລືອກທີ 2:**

   - ໃຊ້ຂໍ້ຄວາມທີ່ຢູ່ໃນ <u>ແຜ່ນພັບຕົວແບບຂອງ FDA</u> ລຸ່ມນີ້, ຫຼື
   - ໃຊ້ແຜ່ນພັບທີ່ອອກແບບເອງທີ່ໄດ້ <u>ຕາມເງື່ອນໄຂທີ່ສໍາຄັນ</u> ຂອງເອກະສານນີ້.

---

---<u>ກັບໄປດ້ານເທິງ</u>---

---

# ຂໍ້ຄວາມແຜ່ນພັບຕົວແບບຂອງ FDA

**ຄໍາແນະນໍາ**

ທ່ານອາດຈະໄດ້ມີຄວາມລະມັດລະວັງພະຍາດທີ່ເກີດຈາກອາຫານຢູ່ບ້ານແລ້ວ, ແຕ່ທ່ານຕ້ອງມີຄວາມລະມັດລະວັງເມື່ອທ່ານອອກຈາກບ້ານນໍາ. ນີ້ແມ່ນສີ່ຂັ້ນຕອນງ່າຍໆທີ່ທ່ານສາມາດປົກປ້ອງຕົວທ່ານເອງ ແລະ ຄົນທີ່ທ່ານຮັກເມື່ອທ່ານເລືອກອາຫານທີ່ພ້ອມຮັບປະທານຢູ່ຮ້ານອາຫານ, ຮ້ານຂາຍຜະລິດພັນຊີ້ນ, ບ່ອນຮັບອາຫານກັບບ້ານ, ຫຼື ຮ້ານຂາຍເຄື່ອງຍ່ອຍ.

## ລ.ດ. 1. ຕະຫນັກເຖິງອາຫານທີ່ດິບ ຫຼື ບຸງບໍ່ສຸກ

ອາຫານທີ່ມາຈາກສັດ ເຊັ່ນ ຊີ້ນ, ໄກ່, ປາ, ຫອຍກາບ, ແລະ ໄຂ່ເມື່ອຮັບປະທານດິບ ຫຼື ປຸງບໍ່ສຸກບາງຄັ້ງມີການປົນເປື້ອນໄວຣັສທີ່ເປັນອັນຕະລາຍ ແລະ ເຊື້ອແບັກທີເຣຍທີ່ສາມາດສ່ຽງຕໍ່ພະຍາດທີ່ເກີດຈາກອາຫານ. ໂດຍສະເພາະ ເດັກນ້ອຍ, ແມ່ຍິງຖືພາ, ຜູ້ສູງອາຍຸ, ແລະ ຜູ້ທີ່ມີລະບົບພູມຄຸ້ມກັນຕໍ່າແມ່ນມີຄວາມສ່ຽງ. ທ່ານມີຄວາມສ່ຽງຖ້າທ່ານມີບັນຫາກ່ຽວກັບພະຍາດຕັບ ຫຼື ຕິດເຫຼົ້າ, ຖ້າທ່ານມີກົດໃນກະເພາະທີ່ຫຼຸດລົງ (ເນື່ອງຈາກການຜ່າຕັດ ຫຼື ໃຊ້ສານຕ້ານກົດ), ຫຼື ຖ້າທ່ານມີລະບົບພູມຄຸ້ມກັນຕໍ່າເນື່ອງຈາກການນໍາໃຊ້ສານສະເຕີຣອຍສ, ພາວະຈາກພາຍາດ ເອດສ, ພະຍາດມະເຮັງ, ຫຼື ພະຍາດເບົາຫວານ; ຫຼື ການຮັກສາ ເຊັ່ນ ການສາຍລັງສີ.

ເພື່ອຫຼຸດຜ່ອນໂອກາດຈາກພະຍາດທີ່ເກີດຈາກອາຫານທ່ານຕ້ອງຢູ່ໃຫ້ຫ່າງຈາກ:

- ປາ ຫຼື ຫອຍກາບ ດິບ,--ຫອຍນາງລົມ, ຊູຊິ, ປາດິບ, ສະຫຼັດປາດິບ
- ຊີ້ນ ຫຼື ອາຫານທະເລທີ່ສັ່ງໃຫ້ປຸງບໍ່ສຸກ ເຊັ່ນ "ສຸກຫ່າມ" ແຮມເບີເກີ, ຊີ້ນງົວ, ຊີ້ນແກະ, ຊີ້ນຫມູ, ຫຼື ປາ.
- ໄຂ່ທີ່ສັ່ງປຸງບໍ່ສຸກ ແລະ ອາຫານທີ່ສັ່ງພ້ອມວັດຖຸດິບທີ່ເປັນໄຂ່ປຸງບໍ່ສຸກ-- ເຊັ່ນ "ຂົວແບບມີນໍ້າໄຫຼ" ຫຼື ໄຂ່ດາວນໍ້າ; ນໍ້າສະຫຼັດ ຫຼື ຊອດ ເຊັ່ນ ຮອລແລນເດັສ, ຊອສມາຍອງແນທີ່ເຮັດເອງ, ແລະ ນໍ້າສະຫຼັດຊາຊ່າ; ອາຫານຫວານເຊັ່ນ ຊັອກໂກແລັດມູສ, ພາຍເມີຣິງ, ແລະ ທີຣາມີຊູ.

## ລ.ດ. 2 ການຂໍກ່ຽວກັບການກະກຽມອາຫານ

ວິທີການປຸງແຕກຕ່າງກັນ. ຖ້າທ່ານບໍ່ຫມັ້ນໃຈວ່າອາຫານທີ່ພ້ອມຮັບປະທານມີສ່ວນປະສົມທີ່ປຸງບໍ່ສຸກ, ຖາມເບິ່ງວິທີການກະກຽມອາຫານ.

## ລ.ດ. 3. ການຂໍໃຫ້ອາຫານປຸງສຸກດີ

ຖ້າສິ່ງທີ່ທ່ານສົນໃຈທີ່ລະສັ່ງມີຊີ້ນ, ປາ, ຫອຍກາບ, ຫຼື ໄຂ່ດິບ, ຕ້ອງຖາມວ່າເອົາວັດຖຸດິບນັ້ນອອກໄດ້ບໍ່. ຖ້າອາຫານທີ່ກະກຽມຈະສັ່ງ, ຂໍໃຫ້ປຸງສຸກດີ.

## ລ.ດ. 4 ເອົາຕົວເລືອກອື່ນ

ສໍາລັບອາຫານບາງປະເພດ, ເຊັ່ນວ່າ ຫອຍນາງລົມທີ່ໃສ່ເປືອກດຽວ ຫຼື ມູສທີ່ມີສ່ວນຜະສົມຫຼັກແມ່ນໄຂ່, ອາດຈະເປັນໄປບໍ່ໄດ້ທີ່ຈະຂໍໃຫ້ປຸງສຸກທົ່ວເຖິງ. ໃນກໍລະນີນັ້ນ, ໃຫ້ເລືອກເອົາຢ່າງອື່ນ. ອາດຈະເປັນຄວາມບໍ່ສະດວກເລັກນ້ອຍທຽບໃສ່ບັນຫາໃຫຍ່ທົ່ວໄປທີ່ເກີດຈາກພະຍາດທີ່ເກີດຈາກອາຫານ.

ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບພະຍາດກ່ຽວກັບອາຫານ ແລະ ວິທີປ້ອງກັນ, ໃຫ້ລົມກັບຜູ້ປຶກສາດ້ານສຸຂະພາບ ຫຼື ພະແນກສາທາລະນະສຸກທ້ອງຖິ່ນຂອງທ່ານ, ຫຼື ເລີ່ງທີ່ເວັບໄຊ້ www.foodsafety.gov

**ແຜ່ນພັບຕົ້ນສະບັບຂອງ FDA ສະແດງໃຫ້ເຫັນວ່າໃຜມີຄວາມສ່ຽງ, ອາຫານທີ່ມີຄວາມສ່ຽງ, ແລະ ສາເຫດຂອງພະຍາດ**

ໃນຂະນະທີ່ຮູບແບບຕົ້ນແມ່ນລວມຢູ່ໃນແຜ່ນພັບຕົວແບບ ຂອງ FDA. ການຮ່ວມເອົາແຜ່ນພັບທີ່ອອກແບບດ້ວຍຕົນເອງ, ທັງໝົດ ຫຼື ບາງສ່ວນ, ແມ່ນເປັນທາງເລືອກເສີມ. ຂະໜາດຂອງແຜນວາດອາດຈະຖືກຄັດເລືອກເພື່ອນຳໃຊ້ຫຼາຍກວ່ານຳໃຊ້ທັງໝົດ, **ຖ້າ** ສ່ວນສະເພາະນຳໃຊ້ໂດຍອີງຕາມອາຫານທີ່ບໍລິການ. ຍົກຕົວຢ່າງ, ຮ້ານຂາຍອາຫານທີ່ໃຫ້ບໍລິການ *ຫອຍປະເພດກາບ* ເຊັ່ນ ຫອຍນາງລົມຢູ່ເປືອກດຽວ, ອາດຈະເລືອກທີ່ຈະລວມເອົາເປັນສ່ວນໜຶ່ງຂອງແຜນວາດການຮັບມືກັບ *ຫອຍກາບ* ແລະ ບໍ່ເອົາສ່ວນອື່ນ.

ແຜນຕົວແບບບໍ່ແມ່ນສິ່ງທີ່ຈະໃຊ້ຢ່າງເປັນເອກະລາດໂດຍບໍ່ມີແຜ່ນພັບ. ນຳໃຊ້ແຜນຢ່າງດຽວຕ້ອງປະກອບມີການບໍ່ປະຕິບັດກັບຂໍ້ກຳນົດຂອງ *ການແຈ້ງເຕືອນ.*

| **ພະຍາດທີ່ເກີດຈາກອາຫານແມ່ນປ້ອງກັນໄດ້ - ຖ້າທ່ານມີການລະວັງທີ່ຖືກຕ້ອງ** | | |
|---|---|---|
| **ອາຫານທີ່ມີຄວາມສ່ຽງ (ນີ້ແມ່ນລາຍການບາງສ່ວນ)** | **ໃຜມີຄວາມສ່ຽງ** | **ສາເຫດຂອງພະຍາດ** |
| **ໄຂ່ດິບ ຫຼື ບຸງບບໍ່ສຸກ:**<br>ນ້ຳສະຫຼັດຊີຊ່າ; ໄຂ່ທີ່ປຸງອ່ອນໆ; ແຊນວິດ ມອນ ຄລິສໂຕ; ເຂົ້າໜົມພາຍເມີຣິງ; ເຂົ້າໜົມຊັ້ນ ແລະ ຄີມບາງປະເພດ; ມູສ; ຊອສທີ່ເຮັດດ້ວຍໄຂ່ດິບ (ຕົວຢ່າງ ຮອນແລນເດສ) | **ທຸກຄົນ, ພິເສດແມ່ນ**<br>ຜູ້ສູງອາຍຸ<br>ເດັກນ້ອຍ<br>ຜູ້ທີ່ມີບັນຫາດ້ານພູມຄຸ້ມກັນອ່ອນແອ | Salmonella Enteritidis |
| **ຜະລິພັນນົມດິບ:**<br>ນົມດິບ ຫຼື ທີ່ບໍ່ທັນໄດ້ຂ້າເຊື້ອ; ຊີສກ້ອນເບົາເຊັ່ນ Camembert, Brie | **ທຸກຄົນ, ພິເສດແມ່ນ**<br>ແມ່ຍິງຖືພາ<br>ຜູ້ສູງອາຍຸ<br>ຜູ້ທີ່ມີບັນຫາດ້ານພູມຄຸ້ມກັນອ່ອນແອ<br>ເດັກນ້ອຍ | Listeria monocytogenes<br>E. coli O157:H7<br>Campylobacter<br>Salmonella |
| **ຊີ້ນດິບ ຫຼື ປີ້ງສຸກຫ່າມ:**<br>ແຮມເບີເກີ, ຊີ້ນປ່ຽງ | **ທຸກຄົນ, ພິເສດແມ່ນ**<br>ຜູ້ສູງອາຍຸ<br>ເດັກນ້ອຍ | E. coli O157:H7<br>Salmonella |
| **ດິບ ຫຼື ປຸງບໍ່ສຸກ:**<br>*ຫອຍກາບ;* ຫອຍແຄງດິບ ຫຼື ຫອຍນາງລົມ ເທິງເປືອກເຄິ່ງດຽວ | **ທຸກຄົນ, ພິເສດແມ່ນ**<br>ຜູ້ທີ່ມີພະຍາດຕັບ ຫຼື ການຕິດເຫຼົ້າ<br>ຜູ້ທີ່ມີບັນຫາດ້ານພູມຄຸ້ມກັນອ່ອນແອ | Vibrio vulnificus<br>ເຊື້ອພະຍາດເຊວດ່ຽວອື່ນໆ<br>ໄວຣັສຕັບອັກເສບຊະນິດ A |
| **ປາດິບ:**<br>ຊູຊິ, ສະຫຼັດຊີ້ນປາ, ປາທູນາປ່ຽງ | **ທຸກຄົນ, ພິເສດແມ່ນ**<br>ຜູ້ທີ່ມີບັນຫາດ້ານພູມຄຸ້ມກັນອ່ອນແອ<br>ຜູ້ສູງອາຍຸ | ພະຍາດກາຝາກ<br>Vibrio parahaemolyticus |

---

---ກັບໄປດ້ານເທິງ---

---

<table>
<tr><th colspan="2">ເງື່ອນໄຂທີ່ສຳຄັນ<br>ສຳລັບແຜ່ນພັບການໃຫ້ຄຳແນະນຳຜູ້ບໍລິໂພກທີ່ອອກແບບດ້ວຍຕົນເອງກ່ຽວກັບອາຫານທີ່ມາຈາກສັດທີ່ດິບ ຫຼື ບຸງບໍ່ສຸກ</th></tr>
<tr><td>ເງື່ອນໄຂທີ່ສຳຄັນ</td><td>ວິທີການປະຕິບັດຕາມເງື່ອນໄຂ / ສິ່ງທີ່ລະບຸໄວ້ 1</td></tr>
<tr><td>1. ໃຫ້ມີຂໍ້ມູນທີ່ເປັນວິທະຍາສາດ , ທີ່ໄດ້ຕາມາດຖານ ; ລຸ່ມນີ້</td><td>1.ແຜ່ນພັບຂໍ້ມູນຕ້ອງກົງກັບຂໍ້ມູນທາງວິທະຍາສາດທີ່ກ່ຽວຂ້ອງກັບການແນະນຳຜູ້ບໍລິໂພກຈາກ ເວັບໄຊ້ <u>(www.cfsan.fda.gov/~mow/foodborn.html) </u>& ແລະ ແຜ່ນພັບຕົວແບບ.</td></tr>
<tr><td>2. ອະທິບາຍຄວາມອັນຕະລາຍ</td><td>2. ອະທິບາຍວ່າ:<br>ຫົວຂໍ້ທີ່ກວ້າງ, ເຊັ່ນ ແບັກທີເຣຍ, ເຊື້ອໄວຣັສ, ພະຍາດກາຝາກ, ຫຼື<br>“ເຊື້ອພະຍາດ”, ຫຼື<br>ເຊື້ອພະຍາດຈຸລະໂຣກສະເພາະ</td></tr>
<tr><td>3. ອະທິບາຍວ່າເປັນຫຍັງ ອາຫານທີ່ມາຈາກສັດທີ່ດິບ ຫຼື ; ບຸງບໍ່ສຸກມີຄວາມອັນຕະລາຍ</td><td>3. ຊີ້ໃຫ້ເຫັນເຖິງຄວາມເປັນອັນຕະລາຍທີ່ເກີດຂຶ້ນຍ້ອນອາຫານທີ່ມາຈາກຊີ້ນສັດບໍ່ໄດ້ຮັບການປຸງສຸກດີ ຫຼື<br>ບໍ່ໄດ້ຖືກຄວາມຮ້ອນທີ່ຢູ່ໃນລະດັບການຄວບຄຸມພະຍາດທີ່ເປັນອັນຕະລາຍ</td></tr>
<tr><td>4. ສະຖານະທີ່ຜູ້ບໍລິໂພກມີ : ຄວາມສ່ຽງຕໍ່ພະຍາດສູງ</td><td>4. ປະເພດທີ ສີ້ (4) ຕ້ອງໄດ້ກ່າວເຖິງ:<br>• ຜູ້ສູງອາຍຸ<br>• ເດັກນ້ອຍ<br>• ແມ່ຍິງຖືພາ<br>• ຜູ້ທີ່ມີພູມຄຸ້ມກັນຮ່າງກາຍບົກພ່ອງ<br>ຄຳແນະນຳຕ້ອງກ່າວເຖິງ ບຸກຄົນທີ່:<br>• ມີພະຍາດຕັບ (ກ່າວເຖິງການຕິດເຫຼົ້າ)<br>• ກົດໃນກະເພາະອາຫານຕ່ຳເນື່ອງຈາກການນຳໃຊ້ຢາລົດກົດ ຫຼື ການຜ່າຕັດກະເພາະ<br>• ລະບົບພູມຄຸ້ມກັນອ່ອນແອເນື່ອງຈາກ ພະຍາດເອດສ, ພະຍາດມະເຮັງ, ການຮັກສາດ້ວຍການສາຍລັງສີ, ພະຍາດເບົາຫວານ, ແລະ ໃຊ້ສານສະເຕີຣອຍສ</td></tr>
<tr><td rowspan="2">5.ໃຫ້ຄຳແນະນຳແກ່ຜູ້ບໍລິໂພກທັງໝົດໂດຍເນັ້ນໃສ່ພິເສດແມ່ນຜູ້ທີ່ມີຄວາມສ່ຽງ<br><br>ລວມເອົາທັງຂໍ້ຄວາມທີ່ໄດ້ບອກລາຍການອາຫານທີ່ກວມເອົາ:<br>ອາຫານທີ່ມາຈາກສັດທີ່ບໍລິການໃນຮູບແບບພ້ອມຮັບປະທານທີ່ດິບ, ບຸງບໍ່ສຸກ, ຫຼື<br>ບໍ່ຜ່ານການປຸງແຕ່ງເພື່ອຂ້າເຊື້ອພະຍາດຈຸລະໂລກ.<br><br>ຍົກຕົວຢ່າງ, ອາຫານດິບ ຫຼື ປຸງບໍ່ລຸກທີ່ມາຈາກ ຊີ້ນງົວ, ໄຂ່, ປາ, ຫຼື ຫອຍກາບແຂງ<br>ທີ່ບໍລິການໃນຮູບແບບພ້ອມຮັບປະທານ</td><td>ຕະໜັກເຖິງບັນຫາ. ທຸກໆຄົນແມ່ນມີຄວາມສ່ຽງ,<br>ແຕ່ວ່າສະເພາະບຸກຄົນແມ່ນມີຄວາມສ່ຽງສູງຕໍ່ພະຍາດທີ່ເກີດຈາກອາຫານ ແລະ ການປູງແຕ່ງທົ່ວເພື່ອຫຼຸດຜ່ອນຄວາມສ່ຽງ.<br>ທາງເລືອກຜູ້ບໍລິໂພກ:</td></tr>
<tr><td>(ແຜ່ນພັບສາມາດດັດແກ້ໃຫ້ເຂົ້າກັບ ລາຍການອາຫານ / ທາງເລືອກອາຫານ)<br>• ລະວັງອາຫານທີ່ມາຈາກສັດທີ່ດິບ ຫຼື ບຸງບໍ່ສຸກ<br>• ຖາມວ່າອາຫານໄດ້ກະກຽມແນວໃດ<br>• ຮ້ອງຂໍໃຫ້ປຸງອາຫານທົ່ວເຖິງ; ຫຼື ຖ້າອາຫານມີສ່ວນປະກອບດິບ ຫຼື ປຸງບໍ່ສຸກ, ຂໍໃຫ້ເອົາອອກ<br>• ເລືອກອາຫານຢ່າງອື່ນໃນຕູ້ໄຊບ່ອນທີ່ອາຫານເຊັ່ນ ຫອຍນາງລົມທີ່ມີເປືອກດຽທີ່ບໍ່ສາມາດປ່ຽນໄດ້ຕາມຄຳຂໍ</td></tr>
</table>

| | |
|---|---|
| 6. ຮັບສາການເບິ່ງເຫັນໃຫ້ຢູ່ໃນຂອບ, ຮູບແບບ, ຮູບຮ່າງ | **ພາສາທີ່ໃຊ້ໃນຂໍ້ຄວາມ *ການເປີດເຜີຍ* ແລະ *ການແຈ້ງເຕືອນ*** : ພາສາທີ່ໃຊ້ໃນ *ລາຍການອາຫານ* ແມ່ນຕ້ອງສອດຄ່ອງກັບພາສາທີ່ໃຊ້ໃນ *ການເປີດເຜີຍ* ແລະ *ການແຈ້ງເຕືອນ.* ຍົກຕົວຢ່າງ, *ລາຍການອາຫານ* ທີ່ຂຽນເປັນພາສາອັງກິດອາດຈະມີ *ການເປີດເຜີຍ* ແລະ *ການແຈ້ງເຕືອນ* ເປັນພາສາອັງກິດ. *ການເປີດເຜີຍ* ແລະ *ການແຈ້ງເຕືອນ ອາດຈະເປັນພາສາອື່ນ.*<br>**ຂະໜາດຕົວໜັງສືສຳລັບຂໍ້ຄວາມ *ການເປີດເຜີຍ* ແລະ *ການແຈ້ງເຕືອນ*:**<br>ຂະໜາດຕົວໜັງສືໃນເອກະສານຕ້ອງເທົ່າຝ່າມື ຫຼື ໃນໂຕະທີ່ຕັ້ງເຕັ້ນແມ່ນເທົ່າກັບ 11 ຄະແນນ. ຂໍ້ຄວາມຢູ່ປ້າຍປະກາດແມ່ນຕ້ອງໃຫ້ອ່ານອອກເທົ່າກັນກັບທີ່ຢູ່ໃນ *ລາຍການອາຫານ* ທີ່ມີຢູ່ໃນປ້າຍປະກາດ ແລະ ສາມາດອ່ານໄດ້ຈາກບ່ອນທີ່ຜູ້ບໍລິໂພກຢືນຢູ່.<br>ສຳລັບປະໂຫຍກຢູ່ໃນສະຫຼາກທີ່ຂຶ້ນຕົ້ນໃນລະດັບຮ້ານຄ້າ, ຄຳແນະນຳສິນຄ້າແມ່ນອີງຕາມ CFR ຂອງ ກົດໝາຍວ່າດ້ວຍການຕິດສະຫຼາກ ແລະ ການຫຸ້ມຫໍ່ທີ່ເປັນທຳ, 21CFR 101.2 ເຊິ່ງລະບຸວ່າຂະໜາດຂອງຕົວໜັງສືຕ້ອງໃກ້ຄຽງກັບຂະໜາດຂອງແຜນສະແດງ. ປັດໃຈອື່ນໆສາມາດສົ່ງຜົນກະທົບຕໍ່ການອ່ານ, ເຊັ່ນ ປະເພດຂອງຕົວໜັງສື ແລະ ພື້ນຫຼັງ ກັບ ປະເພດຂອງສີ. ການອອກແບບ: ສີຂອງຕົວໜັງສືແມ່ນເພື່ອໃຫ້ມີຄວາມຄົມຊັດທີ່ກົງກັນຂ້າມກັບສີພື້ນຫຼັງ. |
| 7. ບອກວິທີການເພື່ອໃຫ້ໄດ້ຂໍ້ມູນສະເພາະເຈາະຈົງ (ຜູ້ໃຫ້ຄຳປຶກສາດ້ານສຸຂະພາບຂອງຜູ້ບໍລິໂພກຕ້ອງຖືກເອີ່ຍເຖິງຢູ່ໃນແຫຼ່ງທີ່ໄດ້ຮັບອະນຸຍາດອື່ນໆ) | **ຂໍ້ຄວາມທີ່ແນະນຳ:** *"ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບພະຍາດທີ່ເກີດຈາກອາຫານ ແລະ ວິທີປ້ອງກັນ, ປຶກສາຜູ້ໃຫ້ຄຳປຶກສາດ້ານສຸຂະພາບຂອງທ່ານ ຫຼື ພະແນກສາທາລະນະສຸກໃນທ້ອງຖິ່ນຂອງທ່ານ, ຫຼື ເບິ່ງທີ່* ***ເວັບໄຊ້www.foodsafety.gov"*** |
| 8. ແຜນຕົວແບບວາດໃຫ້ເຫັນເຖິງຜູ້ທີ່ມີຄວາມສ່ຽ, ອາຫານທີ່ມີຄວາມສ່ຽງ, ແລະ ສາເຫດຂອງພະຍາດທີ່ລວມຢູ່ໃນແຜ່ນພັບຕົ້ນແບບຂອງ FDA . *ການລວມເອົາເຂົ້າໃນແຜນຕົວແບບຂອງ FDA, ອາດຈະທັງໝົດ ຫຼື ສ່ວນໃດໜຶ່ງ, ແມ່ນທາງເລືອກເສີມ.*<br>ແຜນຕົວແບບບໍ່ແມ່ນສິ່ງທີ່ຈະໃຊ້ຢ່າງເປັນເອກະລາດໂດຍບໍ່ມີແຜ່ນພັບ.<br>ນຳໃຊ້ແຜນຢ່າງດຽວຕ້ອງປະກອບມີການບໍ່ປະຕິບັດກັບຂໍ້ກຳນົດຂອງ *ການແຈ້ງເຕືອນ.* | |

## ແຜນວາດການປະຕິບັດຕາມທີ່ໜ້າເພິ່ງພໍໃຈ

**ຫອຍກາບແຂງ**

ຮ້ານຂາຍອາຫານຈຳໜ່າຍ *ຫອຍກາບ* ຫຼື ບໍລິການ *ຫອຍກາບດິບ* ແລະ ອາຫານທີ່ມາຈາກຊີ້ນດິບເຫຼົ່ານີ້ເທົ່ານັ້ນ ບໍທີ່ຈຳໜ່າຍ ຫຼື ບໍລິການ?

N →

Y ↓

ແຜ່ນພັບກອງປະຊຸມກ່ຽວກັບຄວາມສະອາດຂອງຫອຍກາບແຂ່ງຂ້າມລັດ (ISSC) ທີ່ເປັນລາຍລັກອັກສອນ*ມີທົ່ວໄປຢູ່ໃນສາທາລະນະ*ບໍ?

N →

Y ↓ → ການປະຕິບັດຕາມທີ່ໜ້າເພິ່ງພໍໃຈໄດ້ບັນລຸ

**ອື່ນໆ**

ຮ້ານຂາຍອາຫານໃຫ້ບໍລິການອາຫານທີ່ມາຈາກສັດທີ່ບໍລິການໃນຮູບແບບພ້ອມຮັບປະທານທີ່ດິບ, ປຸງບໍ່ສຸກ, ຫຼື ບໍ່ໄດ້ຮັບການປຸງແຕ່ງເພື່ອກຳຈັດເຊື້ອພະຍາດຈຸລະຊີບ (ເຊັ່ນ ຊີ້ນງົວ (ເບິ່ງໜຶ່ງໃນການຍົກເວັ້ນທີ່ລະຫັດອາຫານ ປີ 1999 ສ່ວນ, § 3-201.11(E)), ໄຂ່. ປາ, ແກະ, ນົມ, ໝູ, ໄກ່, ແລະ/ຫຼື ຫອຍກາບ?)

N → **ບໍ່ມີຄຳແນະນຳຜູ້ບໍລິໂພກ**

Y ↓

*ການເປີດເຜີຍ ລາຍການອາຫານ* ທີ່ອາຫານໄດ້ຖືກ ຫຼື ສາມາດສັ່ງໃນຮູບແບບດິບ ຫຼື ປຸງບໍ່ສຸກ ແມ່ນໝົດທຸກສ່ວນ, ຫຼື ລາຍຫານທີ່ມີສ່ວນປະກອບທີ່ດິບ ຫຼື ປຸງບໍ່ສຸກບໍ?

N → **ນອກເໜືອນຈາກການຮ່ວມມື**

Y ↓

*ລາຍການອາຫານ ແຈ້ງ* ໂດຍ:

-- ການອະທິບາຍ, ຫຼື

-- ໃສ່ເຄື່ອງໝາຍ ແລະ ຂໍ້ຄວາມທາງກ້ອງບໍ?

ຫຼື, ຖ້າບໍ່ມີລາຍການອາຫານ, ໄດ້ມີ *ການເປີດເຜີຍ* ທີ່ເປັນລາຍລັກອັກສອນບໍ?

N → **ນອກເໜືອນຈາກການຮ່ວມມື**

Y ↓

ຮ້ານຄ້າຂາຍອາຫານ *ແຈ້ງເຕືອນ* ຜູ້ບໍລິໂພກກ່ຽວກັບຄວາມສ່ຽງດ້ານສຸຂະພາບບໍ?

N → **ນອກເໜືອນຈາກການຮ່ວມມື**

Y ↓

ຮ້ານຄ້າຂາຍອາຫານ *ແຈ້ງເຕືອນ* ດ້ວຍວິທີການອື່ນໆ;

-- *ຂໍ້ ຄວາມການແຈ້ງເຕືອນ*, ຫຼື

-- ແຜ່ນພັບຕົວແບບຂອງ FDA, ຫຼື

-- ແຜ່ນພັບທີ່ອອກແບບດ້ວຍຕົນເອງ, ຫຼື

-- ຂໍ້ຄວາມສະຫຼາກກ່ຽວກັບການປຸງບໍ່ສຸກ RTE, ອາຫານແບ່ງເປັນສ່ວນເຊັ່ນ ຈາກຕູ້ໂຊອາຫານ, ຫຼື

-- ຮູບແບບອື່ນໆທີ່ເປັນລາຍລັກອັກສອນ, ຫຼື ຕາມຄຳແນະນຳການປະຕິບັດ

N → **ນອກເໜືອນຈາກການຮ່ວມມື**

Y ↓

*ການແຈ້ງເຕືອນ ມີໃຫ້ເຫັນທົ່ວໄປ* ຫຼື ອ່ານອອກບໍ?

N → **ນອກເໜືອນຈາກການຮ່ວມມື**

Y ↓

**ການປະຕິບັດຕາມທີ່ໜ້າເພິ່ງພໍໃຈໄດ້ບັນລຸ**

---



---

ຂໍ້ຄວາມ Hypertext ອັບເດດໂດຍ cjm/dms 2000-APR-03
http://vm.cfsan.fda.gov/~dms/fc99guid.html